# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 9 ພຶສຈິກາ 2008 (11-9-2008)

## ຢ່າເຮັດຕາມຝ່າຍໂລກ ແຕ່ໃຫ້ມີການປ່ຽນແປງ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 12:1-18,14-21

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

**ບົດຮຽນນີ້ໃຫ້ກໍາລັງໃຈທ່ານດໍາເນີນຊີວິດຄຣິສຕຽນໂດຍການອຸທິດຖວາຍຕົວທ່ານໃຫ້ກັບພຣະເຈົ້າ.ມີຊີວິດຢູ່ຢ່າງອ່ອນນ້ອມຖ່ອມຕົວແລະທໍາຄວາມດີຕໍ່ໝົດທຸກໆຄົນທີ່ເປັນເພື່ອນແລະເປັນສັດຕູ.**

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ທ່ານອາຈານໂປໂລໄດ້ສອນວ່າດ້ວຍຄວາມເມດຕາຂອງພຣະເຈົ້າຕໍ່ຜູ້ທີ່ເຊື່ອທຸກຄົນ, ພວກເຂົາຄວນມີການປ່ຽນແປງເຂົ້າໃນການຍອມຖວາຍຕົວ. ຖ່ອມຕົວຕິດຕາມພຣະຄຣິດຜູ້ຊົງທໍາຄວາມດີຕໍ່ທຸກຄົນ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ:**

ມີຜູ້ໃຫຍ່ຫຼາຍຄົນບໍ່ໄດ້ມີຄວາມຕິດພັນຢູ່ກັບພຣະທັມຄໍາສອນຂອງອົງພຣະຜູ້ເປັນເຈົ້າ ໃນການດໍາເນີນຊີວິດປະຈໍາວັນຂອງພວກເຂົາ. ພວກເຂົາມີຊີວິດແຕກຕ່າງຫຼາຍໃນທີ່ທໍາງານແລະຢູ່ທີ່ໂບດ. ໃນພວກເຂົາແລ້ວລະບົບການດໍາເນີນຊີວິດມີການປ່ຽນແປງເມື່ອເວລາວັນອາທິດກັບມາເປັນວັນຈັນ, ຂາດການຕິດພັນກັບພຣະເຈົ້າແມ່ນເປັນຄວາມຈິງ, ຄົງເປັນຢູ່ຢ່າງນັ້ນແລະກໍເປັນອັນຕລາຍທີ່ສຸດ, ບົດຮຽນນີ້ຈະຊ່ວຍທ່ານສ້າງຄວາມຜູກພັນກັບພຣະທັມຄໍາສອນໃຫ້ດໍາເນີນຊີວິດຕາມແບບແຜນຂອງທ່ານໃນໂລກນີ້ ໂດຍການຖວາຍຕົວທີ່ຖືກຕ້ອງດ້ວຍການຖ່ອມຕົວແລະດ້ວຍຄວາມຮັກ.

ທ້າວເຈີກ ບໍ່ມັກຮຽນໃນໂຮງຮຽນມັດທະຍົມແຕ່ໃນທີ່ສຸດລາວກໍໄດ້ຮັບໃບປະກາດສະນີຍະບັດ. ໃນເວລາລາວຍັງຮຽນຢູ່ໃນຂັ້ນມັດທະຍົມນັ້ນລາວໄດ້ໃຊ້ກັນຊາແລະເຫຼົ້າ, ລາວບໍ່ແມ່ນເປັນຄົນທີ່ບໍ່ດີແຕ່ລາວບໍ່ມີຄວາມໄຝ່ຝັນແລະຫລັກການດໍາເນີນຊີວິດທີ່ຖືກຕ້ອງ. ໃນຕອນຄໍ່າວັນນຶ່ງໃນເວລາກໍາລັງສຶກສາພຣະຄັມພີຢູ່ ລາວໄດ້ຍິນສຽງຮຽກເອີ້ນຂອງພຣະເຈົ້າໃຫ້ເຂົ້າມາຮັບເອົາຄວາມລອດພົ້ນແລະເຂົ້າໃນການຮັບໃຊ້.

ໃນທຸກວັນນີ້ ເຈີກເປັນສາມີທີ່ດີແລະເປັນພໍ່ທີ່ດີ, ລາວຍັງເປັນຜູ້ຊ່ອຍສິດຍາພິບານຂອງພວກເຮົາ. ໄດ້ຮັບໃຊ້ໃນຄຣິສຕະຈັກເປັນເວລານານເຖິງ 18 ປີ.ລາວຈະປະສົບຜົນສໍາເຣັດໃນການຮຽນເອົາດອກເຕີດີກຣີໃນປີນີ້ ແລະລາວກໍມີແຜນການທີ່ຈະເປັນຜູ້ຮັບໃຊ້ ເມື່ອເວລາໃດທີ່ພຣະເຈົ້າຊົງພໍພຣະທັຍ. ແມ່ນຫຍັງເກີດຂຶ້ນກັບເຈີກ ? ພັນລະຍາຂອງລາວໄດ້ມີການປ່ຽນແປງ ໃນເວລາທີ່ລາວໄດ້ຕັດສິນໃຈຖວາຍການດໍາເນີນຊີວິດຂອງລາວໃຫ້ກັບອົງພຣະເຢຊູຄຣິດ. ຂະນະທີ່ເຮົາສຶກສາບົດຮຽນນີ້.ເຮົາສາມາດເຫັນ ແມ່ນອັນໃດເຂົ້າມາພົວພັນໃນການດໍາເນີນຊີວິດອຸທິດຕົວຕໍ່ພຣະເຈົ້າ.

## ສຶກສາພຣະຄັມພີ

**1. ການຖວາຍຕົວ:** (ໂຣມ 12:1–2 )

ໃນຄຳເວົ້າ **ຈົ່ງມີ** ໄດ້ສະແດງ **ໂຣມ 12-16** ໄດ້ບັນລະຍາຍເຖິງຜົນ ທາງການປະຕິບັດນັ້ນຄວນມີ ຄວາມປາກົດແຈ້ງໃນຊີວິດຂອງບຸກຄົນນັ້ນໃນພື້ນຖານຂອງຄວາມແນ່ນອນໃຈໃນປັດຈຸບັນ. **ໂຣມ 1-11** ໃນຂໍ້ທີນຶ່ງເຖິງຂໍ້ທີສິບເອັດແມ່ນໄດ້ອະທິບາຍຢ່າງລະອຽດຂອງໜ້າທີ່ຮັບຄວາມພົ້ນເປັນທີ່ສຳເຣັດທາງອົງພຣະເຢຊູຄຣິດ. ໃນຂໍ້ຄວາມນັ້ນທ່ານໂປໂລໄດ້ອະທິບາຍເຖິງຄວາມຕ້ອງການຂອງພວກເຮົາໃນການທົດແທນຈາກຄວາມບາບແລະຄວາມປອດພັຍທີ່ຈັດຫາໃຫ້ໂດຍການກະທຳຂອງອົງພຣະເຢຊູຄຣິດທີ່ມີເປັນຕົວຢ່າງໃນຈົດໝາຍຫຼາຍໆສະບັບຂອງທ່ານໂປໂລໃນພາກທີນຶ່ງຂອງພັງສືໂຣມແມ່ນໄດ້ອະທິບາຍເຖິງຫຼັກນິຍົມຂອງຄຣິສຕຽນ ແລະພາກທີສອງແມ່ນອະທິບາຍເຖິງຫຼັກນິຍົມທີ່ມີການປ່ຽນແປງການດຳລົງຊີວິດປະຈຳວັນ.

ທ່ານໂປໂລໄດ້ຊັກຊວນໃຫ້ຜູ້ອ່ານຂອງເພິ່ນອຸທິດຖວາຍຕົວໃຫ້ກັບພຣະເຈົ້າ. ຄຳວ່າອຸດທິດຖວາຍຕົວມີຄວາມໝາຍວ່າເອົາໃຈໃສ່ຕໍ່ພຣະປະສົງຂອງພຣະເຈົ້າໃຫ້ແໜ້ນແກ່ນ, ຍິນຍອມ, ອຸທິດຕົນ, ປະກອບສ່ວນ, ແລະເສັຽສະລະແມ່ນມີຄວາມໝາຍຂອງຄຳວ່າ ອຸທິດຕົນ. ພື້ນຖານຂອງການຮຽກເອີ້ນໃຫ້ມີຊີວິດອຸທິດຖວາຍຕົວແມ່ນພຣະເມດຕາຂອງພຣະເຈົ້າ ພາສາກຣີກທີ່ແປຄວາມຂອງຄຳວ່າ ເມດຕາແມ່ນຄວາມເຫັນອົກເຫັນໃຈຫຼືຄວາມສົງສານໃນການຈັດຫາຄວາມປອດພັຍຂອງເຮົາ. ພຣະເຈົ້າໄດ້ມີຄວາມເມດຕາສົງສານໃຫ້ກັບພວກເຮົາແລະມອບເປັນຂອງພຣະຣາຊທານທີ່ພວກເຮົາບໍ່ສົມຄວນໄດ້ຮັບ. ພວກເຮົາມີຄວາມພົ້ນດ້ວຍຄວາມເມດຕາສົງສານ ໃນເບື້ອງຕົ້ນຂອງການດຳເນີນຊີວິດຄຣິສຕຽນ. ພວກເຮົາເຮັດຫຼາຍສິ່ງອອກຈາກຄວາມຮູ້ສຶກສຳນຶກຮັບຜິດຊອບໃນໜ້າທີ່ ແຕ່ອອກມາຈາກຄວາມຮັບຜິດຊອບທີ່ມີຄວາມກະຕັນຍູຕໍ່ພຣະເຈົ້າ, ການກະຕັນຍູຕໍ່ພຣະເຈົ້າໂດຍສະເພາະຄວາມຍິ່ງໃຫຍ່ໃນຄວາມເມດຕາກໍຄວນຈະພໍພຽງທີ່ຈູງໃຈເຮົາໃຫ້ມີຊີວິດຢູ່ດ້ວຍການອຸທິດຖວາຍຕົວໃຫ້ກັບພຣະເຈົ້າ. ການໃຊ້ຊີວິດທີ່ອຸທິດຖວາຍຕົວແມ່ນຮ່ວມທັງຮ່າງກາຍ, ຈິດໃຈ, ແລະຈິດວິນຍານ. ພວກເຮົາດຳລົງຊີວິດຢູ່ໃນເວລາທີ່ມີຫຼາຍໆຄົນຕ້ອງການໃຊ້ຊີວິດຢູ່ຢ່າງສະດວກສະບາຍ. ພວກເຮົາແມ່ນເຄີຍເວົ້າຢູ່ສເມີວ່າເທົ່າທີ່ຄົນພວກນັ້ນມີຄວາມສາມາດໃນວຽກງານຂອງເຂົາ ມັນດີແລ້ວບໍ່ໄດ້ເຮັດຫຍັງແຕກຕ່າງກັບພວກເຂົາໃຊ້ຊີວິດໃນສ່ວນບຸກຄົນ. ຢ່າງໃດກໍຕາມ, ທ່ານໂປໂລໄດ້ເວົ້າວ່າມັນເປັນພຽງແຕ່ເຫດຜົນວ່າໃນຂະນະທີ່ເຮົາຍ້ອມເສັຽສະລະການດຳລົງຊີວິດຢູ່ທັງໝົດຂອງເຮົາໃຫ້ກັບພຣະເຈົ້າ ເມື່ອພວກເຮົາມອບຊີວິດໃຫ້ກັບພຣະເຈົ້າ ພວກເຮົາກໍມອບໃຫ້ພຣະອົງນຳພາຊີວິດຂອງເຮົາ ແລະດຳເນີນຊີວິດທີ່ບໍຣິສຸດແມ່ນການປະຕິບັດຂອງການຮັບໃຊ້ແລະນະມັສການແມ່ນເປັນການເພິ່ງພໍໃຈຂອງພຣະເຈົ້າ.

ໂປໂລໄດ້ຕັກເຕືອນຜູ້ອ່ານຂອງເພິ່ນບໍ່ໃຫ້ດຳເນີນຕາມຍຸກນີ້. ຄຳເວົ້າຍຸກນີ້ ອ້າງເຖິງວັດທະນະທັມແລະຮ່ວມກັບຈິດໃຈຂອງຄົນທີ່ບໍ່ຮູ້ຈັກກັບພຣະຄຣິດ. ສະເພາະຜູ້ທີ່ຕິດຕາມພຣະຄຣິດພວກເຮົາແມ່ນຖືກກົດດັນໃຫ້ເຂົ້າສ່ວນໃນການປະຕິບັດທຸກສິ່ງຂອງໂລກແລະເຮັດຕາມຄວາມປາດຖນາຂອງເຂົາ. ແທນທີ່ຈະກະທຳຕາມ,ຄຣິສຕຽນຈຳຕ້ອງມີການປ່ຽນແປງໂດຍການປະຕິຮູບເອົາແຕ່ສິ່ງໃຫມ່ເຂົ້າໃນຈິດໃຈຂອງພວກເຂົາ.

ເຮັດແນວໃດ ຈິ່ງຈະມີຄວາມສາມາດພຽງພໍທີ່ຈະເລືອກລະຫວ່າງເສັ້ນທາງໂລກແລະເສັ້ນທາງຂອງພຣະເຈົ້າ? ສະຕິປັນຍາທີ່ເຮັດໃຫ້ຮູ້ຈັກທີ່ຈະເລືອກແມ່ນມາຈາກຈິດໃຈທີ່ມີການຍ້ອມຮັບການປ່ຽນແປງໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດ. ການສຶກສາພຣະຄັມພີ, ການອະທິຖານ, ການນະມັສການແລະການເຂົ້າປະກອບສ່ວນກັບຜູ້ທີ່ມີຄວາມເຊື່ອໃນການຮັບໃຊ້ພຣະເຈົ້າຕລອດທັງຄຣິສຕະຈັກຂອງລາວແມ່ນການກັບໃຈໃຫມ່ເປັນຫຼັກພື້ນຖານທີ່ສຳຄັນ

ບຸກຄົນໃດທີ່ມີການປ່ຽນແປງໃນຊີວິດສາມາດຍອມຮັບພຣະປະສົງຂອງພຣະເຈົ້າ. ຫລາຍກວ່າການມະທັສຈັນແລະກໍຢາກທີ່ຈະຄົ້ນພົບ. ພຣະເຈົ້າຕ້ອງການໃຫ້ພວກເຮົາຮູ້ຄວາມສົມບູນຂອງພຣະອົງຈະມີໄວ້ສຳລັບຊີວິດຂອງພວກເຮົາ. ຈຸດປະສົງຂອງພຣະອົງແມ່ນຄົ້ນພົບດ້ວຍການມີຊີວິດຢູ່ ແລະອຸທິດຖວາຍຕົວ.

## 2. <u>ຢູ່ດ້ວຍການຖ່ອມຕົວເປັນທີ່ສຳຄັນ</u>: (ໂຣມ 12:3-8)

ກ່ອນຫນ້າການປ່ຽນແປງຂອງໂປໂລ, ທ່ານແມ່ນຜູ້ນຶ່ງທີ່ມີອິດທິພົນພໍສົມຄວນແລະກໍເປັນບຸກຄົນສໍາຄັນໃນສາສນາຂອງຄົນຢິວ. ທ່ານມາຈາກຄອບຄົວທີ່ມີຖານະດີ ໄດ້ຮັບການສຶກສາໃນກຸງເຢຣູຊາເລັມ ເປັນລູກສິດຂອງທ່ານອາຈານຜູ້ນຶ່ງທີ່ມີຊື່ສຽງ, ຄາມາຣີເອັນ ທ່ານຢູ່ພັກຟາຣີຊາຍ ແລະມີຄວາມເຄັ່ງຄັດໃນການສັດທາໃນພຣະເຈົ້າແລະຄວາມຖືກຕ້ອງ.ໂ ປໂລມີຄວາມພູມໃຈໃນຕົວຂອງທ່ານເອງ. ເມື່ອໂປໂລໄດ້ມາພົບກັບອົງພຣະເຢຊູຄຣິດ, ທ່ານຈຶ່ງໄດ້ພົບວ່າທ່ານແມ່ນໃຜແລະພຣະເຢຊູຄຣິດແມ່ນຜູ້ໃດ. ຈາກນັ້ນໂປໂລກໍບໍ່ເໝືອນເກົ່າ ທ່ານຮູ້ວ່າການປ່ຽນແປງໃນຕົວທ່ານນັ້ນແມ່ນເກີດມາຈາກການທໍາງານຂອງພຣະເຈົ້າໃນຕົວຂອງເພິ່ນ. ບົນພື້ນຖານແຫ່ງພຣະຄຸນຂອງພຣະເຈົ້າທ່ານໄດ້ສນັບສນູນໃຫ້ຜູ້ອ່ານຂອງເພິ່ນໄດ້ເຫັນທາດແທ້ຂອງຕົວເອງ ພວກເຂົາກໍຮູ້ທີ່ຈະວາງຕົວແບບໃດ ເມື່ອຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າແລະຕໍ່ໜ້າຄົນອື່ນໆ.

ຖ້າເຮົາຫວນຄິດເບິ່ງນັກການເມືອງ, ດາຣາໜັງ, ບຸກຄົນສໍາຄັນແລະນັກທຸຣະກິດທີ່ໂດ່ງດັງກໍມັກຈະເບິ່ງຕົວເອງແລະວາງຄຸນຄ່າລາຄາຂອງຕົວເອງໄວ້ສູງເກີນໄປ. ແຕ່ຜູ້ທີ່ເຊື່ອບໍ່ເປັນດັ່ງນັ້ນຊີວິດເຂົາແມ່ນຮູ້ຈັກຖ່ອມຕົວເບິ່ງຄືເຂົາຮູ້ຈັກຈັດວາງຕົວໃຫ້ເໝາະສົມຕາມຄວາມເຊື່ອ. ໂປໂລໄດ້ຕິດຕາມຄໍາເຕືອນຂອງເພິ່ນ.ຢ່າຄິດຖືກຕົວເກີນທີ່ຕົນຄວນຈະຄິດນັ້ນແຕ່ຈົ່ງຄິດໃຫ້ພໍສົມກັບຂນາດແຫ່ງຄວາມເຊື່ອທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນເພາະວ່າໃນຮ່າງກາຍອັນດຽວນັ້ນເຮົາມີອະວັຍະວະຫລາຍຢ່າງ ແລະອະວັຍະວະເຫຼົ່ານັ້ນບໍ່ມີໜ້າທີ່ຢ່າງດຽວກັນແລະທໍາງານຕາມພຣະປະສົງຂອງພຣະເຈົ້າ.

ໃນຂໍ້ 6-8 ໂປໂລກ່າວເຖິງເຣື່ອງຂອງພຣະຣາຊທານທາງຝ່າຍຈິດວິນຍານ. ນີ້ແມ່ນຂອງພຣະຣາຊທານພິເສດທີ່ເຮົາໄດ້ຮັບຕາມພຣະປະສົງຂອງພຣະເຈົ້າ ເພື່ອໃຫ້ເຮົານໍາໃຊ້ຕາມພຣະປະສົງຂອງພຣະອົງ. ນີ້ບໍ່ແມ່ນໝົດທຸກຢ່າງ 1 ໂກຣິນໂທ 12ແລະເອເຟໂຊ 14 ໄດ້ກ່າວເຖິງຂອງພຣະຣາຊທານອື່ນໆອີກ. ແລະບໍ່ແມ່ນໝົດທຸກຄົນຈະໄດ້ຮັບຂອງພຣະຣາຊທານຢ່າງດຽວກັນ ແຕ່ທຸກຄົນຈະໄດ້ຮັບແລະບາງຄົນກໍຈະຮັບຫລາຍແລະບາງຄົນກໍຈະໄດ້ຮັບໜ້ອຍຕາມຂນາດຂອງຄວາມເຊື່ອ ເພື່ອເສີມສ້າງໃນພຣະກາຍຂອງພຣະຄຣິດ. ເນື່ອງຈາກຄວາມສາມາດນີ້ແມ່ນຂອງພຣະຣາຊທານມາຈາກພຣະເຈົ້າ ເພື່ອບໍ່ໃຫ້ຜູ້ໃດຜູ້ນຶ່ງນໍາໄປໂອ້ອວດແຕ່ສົມຄວນຈະໃຊ້ໃຫ້ເກີດປໂຍດແກ່ສ່ວນລວມໂດຍການຂອບພຣະຄຸນ.

## 3. <u>ຈົ່ງເຮັດດີກັບທຸກຄົນ:</u> (ໂຣມ 12:14–21)

ໃນຂໍ້ 9 – 21 ແມ່ນເປັນພື້ນຖານຂອງການປະຕິບັດຂອງຜູ້ທີ່ເຊື່ອ ທີ່ຄວນຈະປະຕິບັດຕໍ່ຄົນອື່ນ. ( ຜູ້ທີ່ເຊື່ອ ແລະຜູ້ທີ່ບໍ່ເຊື່ອ ) ເມື່ອເຮົາຄິດຫວນຄືນເຖິງການຖືກຮຽກເອີ້ນໃຫ້ມີຊີວິດທີ່ມີການປ່ຽນແປງ. ຜູ້ທີ່ມີຄວາມເຊື່ອແມ່ນເຮັດກັບຜູ້ທີ່ຂົ່ມເຫັງເຂົາເໝືອນກັບເຂົາເຮັດກັບທຸກຄົນທົ່ວໄປ. ອວຍພອນແກ່ຜູ້ທີ່ຂົມເຫັງພວກເຮົາແມ່ນອ້ອນວອນເພື່ອຜູ້ທີ່ຂົມເຫັງເຂົາແລະອ້ອນວອນຕໍ່ພຣະເຈົ້າເພື່ອພຣະເຈົ້າຈະໄດ້ທໍາງານໃນຊີວິດຂອງເຂົາ. ພວກເຮົາກໍມີຄວາມປາດຖນາຢາກຈະເຫັນຄວາມປ່ຽນແປງໃນຊີວິດຂອງເຂົາ. ພວກເຮົາອ້ອນວອນເພື່ອຜູ້ປ້ອຍດ່າຂົ່ມເຫັງພວກເຮົາ, ຜູ້ອ່ານກໍແມ່ນຖືກຊັກຊວນໃຫ້ມີຄວາມຊົມຊື່ນຍິນດີກັບຜູ້ທີ່ມີຄວາມຊົມຊື່ນຍິນດີ, ຈົ່ງຮ້ອງໃຫ້ກັບຜູ້ທີ່ຮ້ອງໃຫ້ ໝົດທຸກຄົນໃນພວກເຮົາໂດຍປົກກະຕິແລ້ວກໍມີຄວາມເຕັມໃຈທີ່ຈະແບ່ງປັນເອົາຄວາມໂສກເສົ້າຈາກຜູ້ທີ່ໄດ້ຮັບຄວາມໂສກເສົ້າ. ພວກເຮົາແມ່ນມີຄວາມອ່ອນໃຈຕໍ່ຄວາມຮູ້ສຶກຂອງຜູ້ອື່ນຫຼາຍກວ່າຕົນເອງ.
ຄວາມເອົາໃຈໃສ່ຂອງພວກເຮົາແມ່ນຢູ່ທີ່ຜູ້ອື່ນບໍ່ແມ່ນຕົວເຮົາ. ຄໍາເຕືອນໃນຂໍ້ 3 ກໍປາກົດເຫັນອີກໃນຂໍ້ 15 ແລະ 16 ວ່າເຮົາບໍ່ສົມຄວນທີ່ຈະຄິດແຕ່ເຫັນຕົວເຮົາເອງແຕ່ໃຫ້ຄິດເຖິງຄົນອື່ນ. ໃຫ້ປະຕິບັດຕໍ່ຄົນອື່ນດ້ວຍຄວາມຊື່ສັດແລະໃຫ້ການນັບຖືແກ່ເຂົາ.

ອີກຢ່າງນຶ່ງເຮົາມັກຈະໄດ້ຍິນ " ຊີວິດນີ້ບໍ່ຍຸດຕິທັມ " ປົກກະຕິແລ້ວ,ພວກເຂົາໝາຍເຖິງການຜິດພາດຂອງເຂົາແຕ່ພວກເຂົາມີຄວາມຮັບຜິດຊອບໄດ້ຫຼາຍປານໃດຕໍ່ຄວາມຜິດພາດນັ້ນ. ພຣະຄັມພີໄດ້ລະບຸໄວ້ວ່າພວກເຮົາຄວນ

ປ່ອຍວາງທຸກສິ່ງໄວ້ກັບພຣະເຈົ້າ. ໃຫ້ເຮົາມີຄວາມເມດຕາສົງສານແລະຄວາມຖືກຕ້ອງຕໍ່ຜູ້ທີ່ຂົ່ມເຫັງເຮົາ ຖ້າດັ່ງນັ້ນມັນກໍເໝືອນກອງຖ່ານໄຟແດງໃສ່ໄວ້ເທິງຫົວເຂົາ. ທີ່ເຮັດດັ່ງນີ້ບໍ່ແມ່ນເປັນອັນຕະລາຍຕໍ່ເຂົາແຕ່ເປັນການເຮັດໃຫ້ເຂົາເຫັນຄວາມສະວ່າງຫຼືການຜິດພາດຂອງເຂົາ. ການທຳດັ່ງນີ້ກໍເປັນເຫດໃຫ້ເຂົາເກີດມີການກັບໃຈໃຫມ່ຮູ້ທີ່ຈະປະນີປະນອມແລະເປັນເພື່ອນແທ້.

ໃນທີ່ສຸດບຸກຄົນທີ່ມີການປ່ຽນແປງໃນຊີວິດໂດຍແມ່ນພຣະເຈົ້ານຳພາກໍຈະເຮັດການດີຕອບແທນການຊົ່ວ. ຊັຍຊະນະທີ່ຈະມາສູ່ການປ່ຽນແປງຊີວິດໃໝ່ກໍແມ່ນຣິດອຳນາດຂອງພຣະເຢຊູທີ່ສະຖິດຢູ່ນຳຊີວິດຂອງບຸກຄົນທີ່ມີຄວາມເຊື່ອ.

## <u>ບົດຮຽນແຫ່ງຊີວິດ</u>

ຄຣິສຕຽນທີ່ເຂັ້ມແຂງທຸກຄົນ, ຂ້າພະເຈົ້າຮູ້ວ່າພວກເພິ່ນມີຄວາມສາມັກຄີຮ່ວມກັນກັບຜູ້ທີ່ເຊື່ອ ເຂົາໃຊ້ຊີວິດດ້ວຍການເຊື່ອຟັງອີງພຣະເຢຊູຄຣິດ. ໃນແຕ່ລະຄົນເຂົາມີຄວາມຮູ້ສຶກໃນການຕັດສິນໃຈວ່າພວກເຂົາຈະບໍ່ມີຄວາມຍົກເວັ້ນໃດໆ. ບໍ່ມີຄວາມຕໍ່ລອງໃດໆ ແລະມີເຫດຜົນຂອງຄວາມຮູ້ໃນການເຊື່ອຟັງພຣະຄຣິດ ພວກເຂົາມີຄວາມເຂົ້າໃຈໃນແນວທາງການປະຕິບັດຕໍ່ຄົນອື່ນແລະດຳລົງຊີວິດທີ່ເປັນພໍພຣະທັຍຂອງພຣະຄຣິດ. ໃນຊີວິດເຂົາມີການຖ່ອມຕົວ, ຄວາມອີ່ດູສົງສານ, ຄວາມເມດຕາ ແລະການປະຕິບັດຕໍ່ຜູ້ອື່ນ.

### <u>ໃນບົດຮຽນນີ້ທ່ານອາດສາມາດນຳໃຊ້ໃຫ້ເກີດຜົນໄດ້.</u>

- ຂອບພຣະຄຸນພຣະເຈົ້າສຳລັບຄວາມປອດພັຍຂອງທ່ານ.
- ອຸທິດຖວາຍຕົວຂອງທ່ານໃຫ້ກັບພຣະເຈົ້າ.
- ເລີ້ມໃຫ້ມີການປ່ຽນແປງໃນຊີວິດໂດຍການສຶກສາພຣະຄັມພີແລະຕຶກຕອງເອົາ.
- ຮຽນຮູ້ທີ່ຈະຖ່ອມຕົວ
- ນຳໃຊ້ຂອງພຣະຣາຊທານເຂົ້າໃນການຮັບໃຊ້ພຣະເຈົ້າໂດຍຜ່ານທາງຄຣິສຕະຈັກຂອງທ່ານ.
- ໃຫ້ຄວາມເມດຕາຕໍ່ທຸກຄົນຮ່ວມທັງຜູ້ທີ່ຊອບຂົ່ມເຫັງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by LLBC**